Energizer®




# ENERGY E10+



Energizer
1
2
1
3
4
5


1.1



12:03
2015-01-01 Thu
Simple Mobile
AT&T
Energizer
Menu
Names


1.2



2.1



2.2



2.3




**3.1**




**3.2**

## ການແນະນຳໂທລະສັບມືຖືຂອງທ່ານ

ຮຽນຮູ້ກ່ຽວກັບແຜນຜັງ, ປຸ່ມ, ການສະແດງຜົນ ແລະ ໄອຄອນຂອງໂທລະສັບມືຖືຂອງທ່ານ.

---

## ປຸ່ມ

ຕາຕະລາງຕໍ່ໄປນີ້ໃຫ້ຄຳອະທິບາຍຢ່າງວ່ອງໄວກ່ຽວກັບປຸ່ມຂອງໂທລະສັບ:

| ລາຍການ | ປຸ່ມ | ຟັງຄ໌ຊັນໃຊ້ງານ |
|---|---|---|
| 1 | **ຟັງຄ໌ຊັນໃຊ້ງານ** | ເຮັດການດຳເນີນການຕາມທີ່ລະບຸໄວ້ຢູ່ສ່ວນລຸ່ມຂອງໜ້າຈໍ. |
| 2 | **ການນຳທາງ** | ໃນໂໝດສະແຕນບາຍ, ທ່ານສາມາດເຂົ້າເຖິງຟັງຄ໌ຊັນທີ່ຜູ້ໃຊ້ກຳນົດໄວ້, ໃນໂໝດເມນູ, ເລື່ອນເບິ່ງຕົວເລືອກເມນູ. |
| 3 | **ໂທ** | ເປີດລາຍການໂທຫຼ້າສຸດ ຫຼື ໂທຫາເບີໂທທີ່ສະແດງ. ທ່ານສາມາດຮັບສາຍໂທເຂົ້າໄດ້. |
| 4 | **ວາງສາຍ** | ວາງສາຍ ຫຼື ປະຕິເສດສາຍໂທເຂົ້າ. ກົດຄ້າງໄວ້ເປັນເວລາ 3 ວິນາທີເພື່ອເປີດ / ປິດໂທລະສັບ. |
| 5 | **1……0** | ປ້ອນຕົວເລກ, ຂໍ້ຄວາມ ແລະ / ຫຼື ຕົວອັກສອນພິເສດ. |

# ໜ້າຈໍ

ໜ້າຈໍໂທລະສັບມືຖືຂອງທ່ານຖືກອອກແບບດັ່ງນີ້:

(ເບິ່ງຂໍ້ 1.2 – ໜ້າ 2)

# ໄອຄອນ

ຮຽນຮູ້ກ່ຽວກັບໄອຄອນທີ່ສະແດງຢູ່ສ່ວນເທິງຂອງໜ້າຈໍ, ເຊິ່ງຊີ້ບອກສະຖານະຂອງໂທລະສັບ:

| ໄອຄອນ | ຄໍາອະທິບາຍຟັງຄ໌ຊັນ |
|---|---|
|  | ສະແດງສັນຍານເຄືອຂ່າຍປະຈຸບັນ. ຍິ່ງມີຫຼາຍຂີດເທົ່າໃດ, ສັນຍານຍິ່ງແຮງເທົ່ານັ້ນ. |
|  | ສະຖານະແບັດເຕີຣີ. ມີຫຼາຍຂີດສະແດງວ່າແບັດເຕີຣີມີຫຼາຍ. |
|  | SMS ທີ່ບໍ່ໄດ້ອ່ານ. |
|  | ຕັ້ງການເຕືອນ. |
|  | ເປີດໃຊ້ງານຟັງຄ໌ຊັນ Bluetooth ແລ້ວ. |
|  | ຕັ້ງໂປຣໄຟລ໌ເປັນໂໝດງຽບ. |
|  | ຕັ້ງໂປຣໄຟລ໌ເປັນໂໝດກອງປະຊຸມ. |
|  | ຕັ້ງໂປຣໄຟລ໌ເປັນໂໝດກາງແຈ້ງ. |
|  | ເຊື່ອມຕໍ່ຊຸດຫູຟັງແລ້ວ. |
|  | ຕົວຊີ້ບອກການໂຣມມິງ. |

# ການກະກຽມໂທລະສັບມືຖືຂອງທ່ານ

ເລີ່ມຕົ້ນການຕັ້ງຄ່າໂທລະສັບມືຖືຂອງທ່ານສໍາລັບການໃຊ້ງານຄັ້ງທໍາອິດຂອງມັນ

## ຕິດຕັ້ງແຜ່ນ SIM ແລະ ແບັດເຕີຣີ

ເມື່ອທ່ານສະໝັກໃຊ້ການບໍລິການເຊລລູລາ, ທ່ານຈະໄດ້ຮັບແຜ່ນໂມດູລປະຈໍາຕົວຜູ້ສະໝັກໃຊ້ (SIM) ພ້ອມລາຍລະອຽດການສະໝັກໃຊ້, ເຊັ່ນ ໝາຍເລກປະຈໍາຕົວສ່ວນບຸກຄົນ (PIN) ຂອງທ່ານ ແລະ ການບໍລິການເສີມ.

ເພື່ອຕິດຕັ້ງແຜ່ນ SIM ແລະ ແບັດເຕີຣີ,

1. ເອົາຝາປິດແບັດເຕີຣີອອກ.

(ເບິ່ງຂໍ້ 2.1 – ໜ້າ 3)

2. ໃສ່ແຜ່ນ SIM.

ໂທລະສັບຂອງທ່ານມີຊ່ອງໃສ່ແຜ່ນ SIM 2 ຊ່ອງເພື່ອຊ່ວຍໃຫ້ທ່ານສາມາດໃຊ້ແຜ່ນ SIM ໄດ້ 2 ອັນ ແລະ ສັບປ່ຽນໄປມາໄດ້.

(ເບິ່ງຂໍ້ 2.2 – ໜ້າ 3)

- ໃສ່ແຜ່ນ SIM ລົງໃນໂທລະສັບໂດຍໃຫ້ສ່ວນຕໍ່ສີທອງປີ້ນລົງລຸ່ມ.
- ທ່ານສາມາດໃຊ້ການບໍລິການທີ່ບໍ່ແມ່ນເຄືອຂ່າຍ ແລະ ບາງເມນູຂອງໂທລະສັບຂອງທ່ານໄດ້ໂດຍບໍ່ຕ້ອງໃສ່ແຜ່ນ SIM.

3. ໃສ່ແບັດເຕີຣີ.

(ເບິ່ງຂໍ້ 2.3 – ໜ້າ 3)

4. ເອົາຝາປິດແບັດເຕີຣີເຂົ້າຄືນ.

## ໃສ່ແຜ່ນຄວາມຈຳ (ເລືອກໄດ້)

ເພື່ອຈັດເກັບໄຟລ໌ມັລຕິມີເດຍເພີ່ມເຕີມ, ທ່ານຈະຕ້ອງໃສ່ແຜ່ນຄວາມຈຳ.

- ການຟໍແມັດແຜ່ນຄວາມຈຳໃນຄອມພິວເຕີອາດຈະເຮັດໃຫ້ໃຊ້ງານບໍ່ໄດ້ກັບໂທລະສັບຂອງທ່ານ. ຟໍແມັດແຜ່ນຄວາມຈຳໃນໂທລະສັບເທົ່ານັ້ນ.

1. ເອົາຝາປິດແບັດເຕີຣີອອກ.

(ເບິ່ງຂໍ້ 3.1 – ໜ້າ 4)

2. ໃສ່ຕົວຍຶດແຜ່ນຄວາມຈຳພ້ອມດ້ວຍໃຫ້ດ້ານສະຫຼາກປິ່ນຂຶ້ນເທິງ.

(ເບິ່ງຂໍ້ 3.2 – ໜ້າ 4)

# ການໃຊ້ຟັງຄ໌ຊັນພື້ນຖານ

ຮຽນຮູ້ວິທີການໃຊ້ງານຂັ້ນພື້ນຖານຂອງໂທລະສັບມືຖືຂອງທ່ານ.

## ເປີດ ແລະ ປິດໂທລະສັບຂອງທ່ານ

ເພື່ອເປີດໂທລະສັບຂອງທ່ານ,

1. ກົດປຸ່ມປິດເປີດເຄື່ອງ [ ☎ ] ຄ້າງໄວ້.

2. ພິມໝາຍເລກ PIN ຂອງທ່ານໃສ່ ແລະ ກົດຕົກລົງ (ຖ້າມັນຈຳເປັນ).

ເພື່ອປິດໂທລະສັບຂອງທ່ານ, ໄປທີ່ຂັ້ນຕອນທີ 1 ຂ້າງເທິງ.

## ເຂົ້າເຖິງເມນູ ແລະ ແອັບພລິເຄຊັນ

ເພື່ອເຂົ້າເຖິງເມນູ ແລະ ແອັບພລິເຄຊັນ,

ເພື່ອເຂົ້າເຖິງເມນູໂທລະສັບຂອງທ່ານ,

1. ໃນໂໝດບໍ່ໄດ້ໃຊ້ງານ, ກົດປຸ່ມເລືອກຊ້າຍ < ເມນູ > ເພື່ອເຂົ້າເຖິງ ໂໝດເມນູ.

2. ໃຊ້ປຸ່ມນຳທາງເພື່ອເລື່ອນໄປຫາເມນູ ຫຼື ຕົວເລືອກ.

3. ກົດ < ເລືອກ>, < ຕົກລົງ>, ຫຼື ປຸ່ມຢືນຢັນເພື່ອຢືນຢັນຕົວເລືອກ ທີ່ໄຮໄລ້ໄວ້.

4. ກົດ <ກັບຄືນ> ເພື່ອເລື່ອນຂຶ້ນໜຶ່ງລະດັບ, ກົດ [ ☎ ] ເພື່ອກັບ ຄືນຫາໂໝດບໍ່ໄດ້ໃຊ້ງານ.

# ໃຊ້ຟັງຄ໌ຊັນການໂທພື້ນຖານ

ຮຽນຮູ້ການໂທອອກ ຫຼື ຮັບສາຍໂທໃນຂໍ້ນີ້.

**ໂທອອກ:**

1. ໃນໂໝດບໍ່ໄດ້ໃຊ້ງານ, ປ້ອນລະຫັດພື້ນທີ່ ແລະ ເບີໂທລະສັບ.

2. ກົດ [ ] ເພື່ອໂທອອກ.

3. ເພື່ອສິ້ນສຸດການໂທ, ກົດ [ ].

**ຮັບສາຍໂທ:**

1. ເມື່ອມີສາຍໂທເຂົ້າ, ກົດ [ ].

2. ເພື່ອສິ້ນສຸດການໂທ, ກົດ [ ].

# ສົ່ງ ແລະ ເບິ່ງຂໍ້ຄວາມ

ໃນຂໍ້ນີ້, ຮຽນຮູ້ການສົ່ງ ແລະ ເບິ່ງຂໍ້ຄວາມ (SMS).

**ເພື່ອສົ່ງຂໍ້ຄວາມຕົວອັກສອນ:**

1. ໃນໂໝດເມນູ, ເລືອກ ການສົ່ງຂໍ້ຄວາມ → ຂຽນຂໍ້ຄວາມ → ຂໍ້ຄວາມຕົວອັກສອນ.

2. ປ້ອນເນື້ອໃນຂໍ້ຄວາມຂອງທ່ານ.

3. ກົດ < ຕົວເລືອກ> → ສົ່ງຫາ.

4. ປ້ອນເບີໂທປາຍທາງ ຫຼື ເລືອກຈາກສະໝຸດໂທລະສັບ.

5. ກົດ <ຕົກລົງ> ຫຼື ເພີ່ມຕາມຂັ້ນຕອນກ່ອນໜ້າ.

6. ກົດ <ຕົວເລືອກ> → ສົ່ງ.

## ເພີ່ມລາຍຊື່ຕິດຕໍ່

ຮຽນຮູ້ພື້ນຖານຂອງການໃຊ້ຄຸນສົມບັດຂອງສະໝຸດໂທລະສັບ.

### ເພີ່ມລາຍຊື່ຕິດຕໍ່ໃໝ່:

1. ເລືອກເມນູ.

2. ເລືອກສະໝຸດໂທລະສັບ → ເພີ່ມລາຍຊື່ຕິດຕໍ່ໃໝ່.

3. ເລືອກບ່ອນຈັດເກັບຂໍ້ມູນ (ໂທລະສັບ, SIM1, ຫຼື SIM2).

4. ປ້ອນຂໍ້ມູນລາຍຊື່ຕິດຕໍ່.

5. ກົດ < ຕົວເລືອກ > → ບັນທຶກເພື່ອເພີ່ມລາຍຊື່ຕິດຕໍ່ໃສ່ຄວາມຈຳ.

### ຊອກຫາລາຍຊື່ຕິດຕໍ່

1. ໃນໂໝດເມນູ, ເລືອກສະໝຸດໂທລະສັບ.

2. ປ້ອນຕົວອັກສອນສອງສາມຕົວທຳອິດຂອງຊື່ທີ່ທ່ານຕ້ອງການຊອກຫາ.

3. ເລືອກຊື່ຂອງລາຍຊື່ຕິດຕໍ່ຈາກລາຍການຊອກຫາ.

ເມື່ອທ່ານພົບລາຍຊື່ຕິດຕໍ່ແລ້ວ, ທ່ານສາມາດໂທຫາລາຍຊື່ຕິດຕໍ່ນັ້ນໂດຍການກົດ [ ]

# ຟັງເພງ

ຮຽນຮູ້ວິທີການຟັງເພງຜ່ານເຄື່ອງຫຼິ້ນເພງ ຫຼື ວິທະຍຸ FM.

## ຟັງວິທະຍຸ FM:

1. ສຽບຊຸດຫູຟັງທີ່ໃຫ້ມາເຂົ້າກັບແຈັກຫູາຍຊັງຄ໌ຊັນຂອງໂທລະສັບ.

2. ໃນໂໝດເມນູ, ເລືອກມັລຕິມີເດຍ →ວິທະຍຸ FM.

3. ກົດປຸ່ມເລື່ອນລົງເພື່ອເປີດວິທະຍຸ.

4. ຄວບຄຸມວິທະຍຸ FM ໂດຍການໃຊ້ປຸ່ມນຳທາງ.

## ຟັງໄຟລ໌ເພງ:

ຫຼັງຈາກການໂອນໄຟລ໌ເພງໄປຫາໂຟລເດີ "ເພງຂອງຂ້ອຍ" ຂອງໂທລະສັບ ຫຼື ແຜ່ນຄວາມຈຳຂອງທ່ານແລ້ວ,

1. ໃນໂໝດເມນູ, ເລືອກມັລຕິມີເດຍ → ເຄື່ອງຫຼິ້ນສຽງ.

2. ເລືອກໝວດເພງ → ໄຟລ໌ເພງ.

3. ຄວບຄຸມການຫຼິ້ນໂດຍການໃຊ້ປຸ່ມນຳທາງ.

# ການໃຊ້ກ້ອງຖ່າຍຮູບ

ຮຽນຮູ້ພື້ນຖານການຖ່າຍຮູບ ແລະ ເບິ່ງຮູບຖ່າຍ.

## ການຖ່າຍຮູບ

1. ໃນໂໝດເມນູ, ເລືອກກ້ອງຖ່າຍຮູບເພື່ອເປີດກ້ອງຖ່າຍຮູບ.

2. ແນເລນສ໌ໃສ່ວັດຖຸ ແລະ ເຮັດການປັບ.

3. ກົດປຸ່ມຢືນຢັນເພື່ອຖ່າຍຮູບ.
ຮູບຖ່າຍຈະຖືກບັນທຶກໂດຍອັດຕະໂນມັດ.

4. ກົດ < ກັບຄືນ> ເພື່ອຖ່າຍຮູບອື່ນ (ຂັ້ນຕອນ 2).

## ເບິ່ງຮູບທີ່ຖ່າຍແລ້ວ

ກົດປຸ່ມເລືອກຊ້າຍ ຈາກນັ້ນ ເລືອກຮູບຖ່າຍເພື່ອເຂົ້າເຖິງແກເລີຣີ ຮູບຖ່າຍຢ່າງວ່ອງໄວ.

## ຕົວເລືອກກ້ອງຖ່າຍຮູບ

ການເຂົ້າສູ່ຕົວເລືອກກ້ອງຖ່າຍຮູບ ທ່ານຈະສາມາດເລືອກຕົວເລືອກຕໍ່ໄປນີ້:

**ການຕັ້ງຄ່າກ້ອງຖ່າຍຮູບ:**

ເລືອກສຽງຈັດເຕີທຸກຄັ້ງທີ່ທ່ານຖ່າຍຮູບ.

ປ່ຽນຄ່າຮັບແສງເພື່ອປັບຄວາມແຈ້ງຂອງຮູບຖ່າຍ.

ປັບຄວາມຄົມຊັດເພື່ອຈຳແນກພື້ນທີ່ມືດ ແລະ ແຈ້ງ.

ປ່ຽນຄ່າການປ້ອງກັນຕົວກະພິບເພື່ອຫຼຸດເອັບເຟັກເຮືອງແສງໃນຮູບຖ່າຍ.

ແກ້ໄຂໂມງຕັ້ງເວລາຊ້າເພື່ອຖ່າຍຮູບຕົວເອງ.

ປ່ຽນຈຳນວນການຖ່າຍຮູບຕໍ່ເນື່ອງເພື່ອຖ່າຍຮູບເປັນຊຸດ.

## ການຕັ້ງຄ່າຮູບ:

ທ່ານສາມາດປ່ຽນຂະໜາດຮູບ.

ທ່ານສາມາດປັບຄຸນນະພາບຮູບ.

## ສົມດຸນແສງສີຂາວ:

ເລືອກໂທນສີຕາມສະພາບແວດລ້ອມ.

## ໂໝດສາກ:

ຊ່ວຍໃຫ້ທ່ານສາມາດເລືອກໂໝດກາງຄືນ (ເພີ່ມແສງ) ຫຼື ຊ່ວຍໃຫ້ໂທລະສັບສາມາດເລືອກໂໝດທີ່ດີສຸດ.

## ການຕັ້ງຄ່າເອັບເຟັກ:

ເພີ່ມເອັບເຟັກສີໃສ່ຮູບທີ່ຖ່າຍ.

## ບ່ອນຈັດເກັບຂໍ້ມູນ:

ຊ່ວຍທ່ານເລືອກບ່ອນທີ່ຈະຈັດເກັບຮູບທີ່ຖ່າຍ.

# ການໃຊ້ BLUETOOTH

ຮຽນຮູ້ກ່ຽວກັບຄວາມສາມາດຂອງໂທລະສັບຂອງທ່ານໃນການເຊື່ອມຕໍ່ກັບອຸປະກອນໄຮ້ສາຍອື່ນສໍາລັບການແລກປ່ຽນຂໍ້ມູນ.

## ເປີດຄຸນສົມບັດໄຮ້ສາຍຂອງ Bluetooth

1. ໃນໂໝດເມນູ, ເລືອກການຕັ້ງຄ່າ → ການເຊື່ອມຕໍ່ → Bluetooth.

2. ເລືອກຕົວເລືອກ ປິດເປີດເຄື່ອງ.

3. ກົດປຸ່ມເລືອກຊ້າຍເພື່ອເປີດມັນ.

4. ເພື່ອອະນຸຍາດໃຫ້ອຸປະກອນອື່ນຄົ້ນຫາໂທລະສັບຂອງທ່ານ, ເລື່ອນລົງໄປຫາການເບິ່ງເຫັນ ແລະ ກົດປຸ່ມເລືອກຊ້າຍເພື່ອເປີດມັນ.

## ຊອກຫາ ແລະ ຈັບຄູ່ກັບອຸປະກອນທີ່ເປີດໃຊ້ງານ Bluetooth

1. ໃນໂໝດເມນູ, ເລືອກການຕັ້ງຄ່າ → ການເຊື່ອມຕໍ່ → Bluetooth → ອຸປະກອນຂອງຂ້ອຍ → ຊອກຫາອຸປະກອນໃໝ່.

2. ເລື່ອນໄປຫາອຸປະກອນ ແລະ ກົດ < ເລືອກ>.

3. ປ້ອນ PIN ສຳລັບຄຸນສົມບັດໄຮ້ສາຍຂອງ Bluetooth ຫຼື PIN ຂອງ Bluetooth ຂອງອຸປະກອນອື່ນ, ຖ້າມັນມີ ແລະ ກົດ <ຕົກລົງ>.

ເມື່ອເຈົ້າຂອງອຸປະກອນອື່ນປ້ອນລະຫັດດຽວກັນ ຫຼື ຍອມຮັບການເຊື່ອມຕໍ່, ການຈັບຄູ່ແມ່ນສຳເລັດ.

ສົ່ງຂໍ້ມູນໂດຍໃຊ້ຄຸນສົມບັດໄຮ້ສາຍຂອງ Bluetooth.

1. ເລືອກໄຟລ໌ ຫຼື ລາຍການຈາກໜຶ່ງໃນແອັບພລິເຄຊັນຂອງໂທລະສັບຂອງທ່ານທີ່ທ່ານຕ້ອງການສົ່ງ.

2. ກົດ < ຕົວເລືອກ > → ສົ່ງ → ຜ່ານ Bluetooth → ເລືອກຊື່ອຸປະກອນ ຈາກນັ້ນ ຍອມຮັບໄຟລ໌ໃນເຄື່ອງຮັບ.

## ຮັບຂໍ້ມູນໂດຍໃຊ້ຄຸນສົມບັດໄຮ້ສາຍຂອງ Bluetooth

1. ປ້ອນ ຫຼື ຍອມຮັບ PIN ສຳລັບຄຸນສົມບັດໄຮ້ສາຍຂອງ Bluetooth ແລະ ກົດ < ຕົກລົງ> (ຖ້າຈຳເປັນ).

2. ກົດ < ແມ່ນ> ເພື່ອຢືນຢັນວ່າທ່ານເຕັມໃຈທີ່ຈະຮັບຂໍ້ມູນຈາກອຸປະກອນ (ຖ້າຈຳເປັນ).

## ປ່ຽນຊື່ອຸປະກອນ Bluetooth

1. ໃນໂໝດເມນູ, ເລືອກການຕັ້ງຄ່າ → ການເຊື່ອມຕໍ່ → Bluetooth → ຊື່ຂອງຂ້ອຍ.

2. ຂຽນຊື່ທີ່ທ່ານຕ້ອງການ ຈາກນັ້ນ ກົດຕົວເລືອກ → ສຳເລັດ.

## ເລືອກທີ່ຕັ້ງບ່ອນຈັດເກັບຂໍ້ມູນ

1. ໃນໂໝດເມນູ, ເລືອກການຕັ້ງຄ່າ → ການເຊື່ອມຕໍ່ → Bluetooth → ຂັ້ນສູງ → ບ່ອນຈັດເກັບຂໍ້ມູນ.

2. ເລືອກແຜ່ນຄວາມຈຳຖ້າໂທລະສັບຂອງທ່ານໄດ້ໃສ່ແຜ່ນຄວາມຈຳ, ຫຼື ບໍ່ດັ່ງນັ້ນກໍ່ເລືອກໂທລະສັບ.

# ຂໍ້ມູນຄວາມປອດໄພ

ກະລຸນາຈໍາ ແລະ ປະຕິບັດຕາມກົດ ແລະ
ລະບຽບການທີ່ກ່ຽວຂ້ອງທຸກຄັ້ງທີ່ໃຊ້ໂທລະສັບຂອງທ່ານ.
ນີ້ຈະເປັນການປ້ອງກັນຜົນກະທົບຮ້າຍແຮງຕໍ່ທ່ານ ແລະ ສິ່ງແວດລ້ອມ.

## ຄວາມປອດໄພທົ່ວໄປ

| | |
|---|---|
|  | ເມື່ອກໍາລັງຂັບລົດ, ກໍາລັງຂີ່ລົດຖີບ ຫຼື<br>ກໍາລັງຍ່າງ, ບໍ່ຄວນໃຊ້ໂທລະສັບ<br>ຫຼືສາຍຟັງຫູໂທລະສັບ.<br>ມັນອາດເຮັດໃຫ້ຄວາມໃສ່ໃຈມີການປ່ຽນ,<br>ເຊິ່ງສາມາດເປັນສາເຫດພາໃຫ້ເກີດອຸປະຕິເຫດໄ<br>ດ້ ແລະ ຜິດຕໍ່ກົດໝາຍໃນບາງທ້ອງຖິ່ນ.<br>ເພື່ອປ້ອງກັນຄວາມປອດໄພບໍ່ຄວນໃຊ້ໂທລະສັບ<br>ຂອງທ່ານໃນຂະນະຂັບຂີ່,<br>ຈົ່ງລະມັດລະວັງຕໍ່ສະພາບແວດລ້ອມອ້ອມຂ້າງຂ<br>ອງທ່ານ. ປະຕິບັດຕາມຄໍາແນະນໍາ ແລະ<br>ລະບຽບການຄວາມປອດໄພທັງໝົດກ່ຽວກັບກາ<br>ນໃຊ້ອຸປະກອນຂອງທ່ານເມື່ອທ່ານຂັບລົດ. |
|  | ບໍ່ຕ້ອງໃຊ້ໃນເຂດປໍ້ານໍ້າມັນ. |

| | |
|---|---|
|  | ໃຫ້ໂທລະສັບຂອງທ່ານຢູ່ຫ່າງໄກຕົວທ່ານຢ່າງຫນ້ອຍ 15 ມມ ໃນຂະນະທີໂທອອກ. |
|  | ໂທລະສັບຂອງທ່ານອາດຈະເຮັດໃຫ້ມີແສງ ຫລື ແສງເຫຼື້ອມ. |
|  | ສິ່ງນ້ອຍໆອາດພາໃຫ້ເກີດບັນຫາໃຫຍ່ໄດ້. |
|  | ບໍ່ຄວນຖິ້ມໂທລະສັບຂອງທ່ານເຂົ້າໃນກອງໄຟ. |
|  | ເພື່ອຫຼີກລ້ຽງຜົນກະທົບຕໍ່ຫູ,<br>ບໍ່ຄວນຟັງສຽງດັງເກີນໄປ.<br>ການໃຊ້ສຽງທີ່ມີຄວາມກົດດັນເກີນຄວາມກົດດັນຈາກສະເປົ້າ ແລະ<br>ຫູຟັງສາມາດເຮັດໃຫ້ສູນເສຍຫູ. |
|  | ຫຼີກເວັ້ນບໍ່ປະໄວ້ກັບສິ່ງທີ່ເປັນສະໜາມແມ່ເຫຼັກ. |
|  | ເກັບຮັກສາໄວ້ໃຫ້ຫ່າງໄກຈາກອຸປະກອນໄຟຟ້າ ແລະ<br>ອຸປະກອນທາງການແພດເອເລັກໂຕຼນິກອື່ນໆ. |

| | |
|---|---|
|  | ຫຼີກເວັ້ນບ່ອນທີ່ມີອຸນະພູມຮ້ອນ. |
|  | ປິດເຄື່ອງໃນສະຖານທີ່ກຳນົດໃຫ້ປິດໃນໂຮງໝໍ ຫຼື ສະຖານບໍລິການສຸຂະພາບຕ່າງໆ. |
|  | ຫຼີກເວັ້ນບໍ່ໃຫ້ປຽກຊຸ່ມ.<br>ເກັບຮັກສາໂທລະສັບຂອງທ່ານໄວ້ບ່ອນທີ່ແຫ້ງ. |
|  | ປິດເຄື່ອງເມື່ອບອກໃຫ້ປິດຢູ່ເທິງເຮືອບິນ ແລະ ເດີນບິນ. |
|  | ບໍ່ຄວນແຍກໂທລະສັບຂອງທ່ານອອກຈາກກັນ. |
|  | ປິດເຄື່ອງເມື່ອໃກ້ວັດຖຸລະເບີດ ຫຼື ສານລະລາຍ. |
|  | ໃຊ້ສະເພາະອຸປະກອນເສີມທີ່ໄດ້ຮັບອະນຸຍາດ. |
|  | ຢ່າອາໄສໂທລະສັບຂອງທ່ານ<br>ເພື່ອສື່ສານກໍລະນີສຸກເສີນ. |

ກວດເບິ່ງສາຍສາກເປັນປະຈຳ, ໂດຍສະເພາະປັດສຽບ ແລະ
ຊັ້ນທີ່ບົ່ງບອກການເສຍຫາຍ.
ຖ້າສາຍສາກມີຄວາມເສຍຫາຍທ່ານບໍ່ຄວນໃຊ້ຈົນກວ່າແປງ
ສຳເລັດ.

ສຽບສາຍສາກໃສ່ປັກສຽບທີ່ເຂົ້າເຖິງໄດ້ງ່າຍ.
ບໍ່ຄວນສຽບປະໄວ້ພາຍຫຼັງໃຊ້ແລ້ວ.

ໃຊ້ສາຍສາກສະເພາະທີ່ມາກັບເຄື່ອງເທົ່ານັ້ນ.



**ຄຳເຕືອນອັນຕະລາຍໄຟຟ້າ**

ເພື່ອຫຼີກເວັ້ນຄວາມອັນຕະລາຍບໍ່ຄວາມຈັບຫົວ
ປັກສຽບຂອງສາຍສາກ!

ທອດປັກສຽບອອກເມື່ອບໍ່ໃຊ້ແລ້ວ.

ເມື່ອທອດສາຍສາກອອກຄວນຈັບທີ່ຕົວສາຍສາ
ກບໍ່ຄວນຈັບທີ່ສາຍໄຟແລ້ວດຶງອອກ.

ຫົວຕໍ່ໄຟແມ່ນອົງປະກອບທີ່ເຮັດໃຫ້ທ່ານສາມາດ
ທອດອອກຈາກຜະລິດຕະພັນໄດ້ງ່າຍ.

ປັກສຽບຕ້ອງຢູ່ບ່ອນທີ່ເຂົ້າເຖິງງ່າຍ.

ບໍ່ຄວນເກັບອຸປະກອນທ່ານໄວ້ບ່ອນທີ່ມີແດດສ່ອງ,
ຕົວຢ່າງໃນຫົວລົດ ຕົວຢ່າງ.

ເມື່ອມັນຮ້ອນເກີນບໍ່ຄວນໃຊ້ມັນ.

ໃຫ້ລະວັງການໃຊ້ເຄື່ອງໃນຂະນະກຳລັງຍ່າງ.

ຫ້າມບໍ່ໃຫ້ອຸປະກອນມີການກະທົບຮ້າຍແຮງ ຫຼື
ຕົກລົງຈາກຕຳແຫນ່ງທີ່ສູງ,
ມັນອາດເຮັດໃຫ້ເກີດຄວາມເສຍຫາຍ ຫຼື ເຮັດໃຫ້ລະບົບເສຍ.

ຫ້າມບໍ່ໃຫ້ມ້າງ, ສ້ອມແປງ ຫຼື ແປງເຄື່ອງດ້ວຍຕົນເອງ.

ເມື່ອທຳຄວາມສະອາດໃຫ້ໃຊ້ແຜ່ທີ່ສະອາດ ແລະ ໜຸ່ມນອນ.
ຫ້າມບໍ່ໃຫ້ໃຊ້ສານເຄມີ ຫຼື ສະບູໃນການທຳຄວາມສະອາດ.

## EU WEEE

ຂໍ້ມູນສຳລັບບັນດາລູກຄ້າທີ່ໃຊ້ແອັບພລິເຄຊັນຂອງ EU WEEE.



**ເມື່ອໂທລະສັບໝົດອາຍຸການໃຊ້ງານ, ກະລຸນາເອົາແບັກເຕີຣີອອກກ່ອນຈະຖິ້ມລົງຖັງຂີ້ເຫຍື້ອ.**

ຜະລິດຕະພັນນີ້ແມ່ນປະຕິບັດຕາມລະບຽບຂອງສະຫະພາບເອີຣົບທີ່ສົ່ງເສີມການນຳໃຊ້ຄືນ ແລະ ການແປຮູບຄືນສຳລັບເຄື່ອງໃຊ້ໄຟຟ້າ ແລະ ອຸປະກອນອີເລັກໂທຣນິກ. ຜະລິດຕະພັນນີ້ຕ້ອງການໃຫ້ມີການແຍກອອກ ແລະ ໃຊ້ຊັບພະຍາກອນທຳມະຊາດ ແລະ ອາດບັນສານທີ່ເປັນອັນຕະລາຍ. ເຄື່ອງໝາຍຂ້າງເທິງ, ຢູ່ກັບຜະລິດຕະພັນ ຫຼື ກ່ອງໃສ່, ບົ່ງບອກວ່າຜະລິດຕະພັນດັ່ງກ່າວຈະຕ້ອງບໍ່ຖິ້ມປົນກັບຂີ້ເຫຍື້ອທົ່ວໄປໃນເຮືອນ. ແນ່ນອນວ່າ, ມັນຈະເປັນໜ້າທີ່ຮັບຜິດຊອບທ່ານໃນການຖິ້ມອຸປະກອນທີ່ເປັນສິ່ງເສດເຫຼືອ ໂດຍເອົາໃສ່ຈຸດເກັບຂີ້ເຫຍື້ອແປຮູບເຄື່ອງໄຟຟ້າ ແລະ ອຸປະກອນອີເລັກໂທຣນິກ.

ໃນການແຍກຈາກຈຸດເກັບ ແລະ ການແປຮູບຂີ້ເຫຍື້ອອຸປະກອນໃນເວລາທີ່ຖິ້ມຈະຊ່ວຍໃນການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ຮັບປະກັນວ່າມັນໄດ້ຮັບການແປຮູບບທີ່ເປັນມິດຕໍ່ສຸຂະພາບ ແລະ ສິ່ງແວດລ້ອມ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບສະຖານທີ່ຖິ້ມອຸປະກອນເພື່ອແ ປຣູບຄືນ, ກະລຸນາຕິດຕໍ່ຫ້ອງການເມືອງໃນທ້ອງຖິ່ນ, ໜ່ວຍບໍລິການເກັບຂີ້ເຫຍື້ອຄົວເຮືອນ, ຫຼື ຮ້ານທີ່ທ່ານຊື້ຜະລິດຕະພັນດັ່ງກ່າວ.

**ການແນະນຳ:**

- ຫ້າມມ້າງ, ເປີດ ຫຼື ແກ້ອອກ ຫຼື ເຮັດໃຫ້ແບັດເຕີຣີຈີກຂາດ.

- ຫ້າມເອົາຜະລິດຕະພັນ ຫຼື ແບັດເຕີຣີຖິ້ມລົງກອງໄຟ. ຫຼີກເວັ້ນການເກັບເຄື່ອງອຸປະກອນໄວ້ໃນບ່ອນທີ່ມີແສງແດ ດສ່ອງໃສ່ໂດຍກົງ.

- ຫ້າມຕໍ່ວົງຈອນແບັດເຕີຣີ. ຫ້າມກອງແບັດເຕີຣີໃນຕູ້ເລື່ອນ ເພາະມັນອາດລັດວົງຈອນເຊິ່ງກັນ ແລະ ກັນ ຫຼື ອາດສຳພັດກັບວັດຖຸໂລຫະອື່ນໆ.

- ຫ້າມເຮັດໃຫ້ແບັດເຕີຣີມີການເກີດຊ໋ອດໃນແບບກົນຈັກ.

- ໃນກໍລະນີມີການຮົ່ວໄຫຼ, ຫ້າມບໍ່ໃຫ້ນ້ຳກົດເຂົ້າຕາຂອງທ່ານ ຫຼື ຖືກກັບຜິວໜັງ. ຖ້າຫາກມີກໍລະນີດັ່ງກ່າວເກີດຂຶ້ນໃຫ້ລ້າງດ້ວຍນ້ຳສະອາດໃ ນເຂດທີ່ຖືກ ແລະ ຫາການຊ່ວຍເຫຼືອທາງການແພດ.

- ໃຫ້ສັງເກດເບິ່ງເບື້ອງບວດ (+) ແລະ ລົບ (-) ຢູ່ກ້ອນແບັດເຕີຣີ ແລະ ບອກໃຫ້ໃສ່ໃຫ້ຖືກຕ້ອງ.

- ຫ້າມໃຊ້ອຸປະກອນ ຫຼື ແບັດເຕີຣີທີ່ບໍ່ໄດ້ຜະລິດມາໃຊ້ສະເພາະກັບເຄື່ອງດັ່ງກ່າວນີ້.

- ຕິດຕາມການນຳໃຊ້ແບັດເຕີຣີຂອງເດັກ.

- ປຶກສາທ່ານໝໍທັນທີຖ້າຫາກມີການຮັບປະທານສ່ວນປະກອບ ຫຼື ກ້ອນແບັກເຕີຣີ.

- ຕ້ອງຊື້ແບັກເຕີຣີທີ່ໄດ້ຮັບການແນະນຳຈາກຜູ້ຜະລິດສຳລັບເຄື່ອງດັ່ງກ່າວນີ້.

- ຕ້ອງຮັກສາໃຫ້ເຄື່ອງ ແລະ ແບັກເຕີຣີແຫ້ງເປັນປະຈຳ.

- ເຊັດຕົວເຄື່ອງ ຫຼື ກ້ອນແບັກເຕີຣີໃຫ້ສະອາດດ້ວຍແພສະອາດ ແລະ ແຫ້ງ, ຖ້າເຫັນວ່າມັນເປື້ອນ.

- ມັນມີຄວາມຈຳເປັນຕ້ອງສາກແບັກເຕີຣີກ່ອນການນຳໃຊ້. ຄວນໃຊ້ເຄື່ອງສາກ ແລະ ອ່ານຄຳແນະນຳຂອງຜູ້ຜະລິດກ່ອນ ຫຼື ອ່ານຄູ່ມືເຄື່ອງທີ່ກ່ຽວກັບການສາກ.

- ຫ້າມສາກແບັກເຕີຣີເມື່ອໃດທີ່ບໍ່ໄດ້ໃຊ້ມັນແລ້ວ.

- ພາຍຫຼັງທີ່ເກັບໄວ້ນານ, ມັນອາດຕ້ອງການໃຫ້ສາກ ແລະ ປະໃຫ້ໝົດຫຼາຍຄັ້ງ ເພື່ອໃຫ້ໃຊ້ໄດ້ດົນນານ.

- ຕ້ອງເກັບຕົ້ນສະບັບເອກະສານແນະນຳຂອງເຄື່ອງ, ທ່ານອາດມີຄວາມຈຳເປັນໃຊ້ພາຍຫຼັງ.

- ຖ້າເປັນໄປໄດ້, ໃຫ້ເອົາແບັກເຕີຣີອອກຈາກຕົວເຄື່ອງໃນເມື່ອທ່ານບໍ່ໃຊ້ມັນ.

- ບໍ່ຄວນເກັບໄວ້ບ່ອນທີ່ມີຄວາມຮ້ອນ ຫຼື ເຢັນໂພດ ເຊັ່ນໃນລົດລະຫວ່າງຍາມໜາວ. ມັນອາດຈະເຮັດໃຫ້ເຄື່ອງເສຍຫາຍ ຫຼື ແບັກເຕີຣີລະເບີດ.

ຂໍແນະນຳໃຫ້ໃຊ້ເຄື່ອງຢູ່ໃນອຸນະພູມຢູ່ໃນລະຫວ່າງ 5°C ແລະ 35°C.

**ການປ້ອງກັນເສຍຫູ**

ມັນມີຄວາມສ່ຽງຕໍ່ຫູຈາກການປ່ຽນຖ້າຕົວຮັບສຽງ, ຊຸດຟັງຫູ, ລຳໂພງດັງແຮງ ຫຼື ເຄື່ອງສຽງຫາກປັບໃຫ້ດັງເກີນຄວນ. ໃຫ້ປັບສຽງໃຫ້ຢູ່ໃນລະດັບທີ່ບໍ່ເປັນອັນຕະລາຍ. ເມື່ອເວລາຜ່ານໄປ, ທ່ານອາດຄຸ້ນເຄີຍກັບສຽງແຮງ, ແຕ່ອາດເກີດຜົນເສຍຕໍ່ຫູຂອງທ່ານ. ຖ້າທ່ານເລີ່ມໄດ້ຍິນຄຳເວົ້າແບບຫື່ງໆ ຫຼື ເວົ້າບໍ່ແຈ້ງແລ້ວ, ໃຫ້ຢຸດເຊົາໃຊ້ອຸປະກອນ ແລະ ປຶກສາຊ່ຽວຊານດ່ວນ. ການທີ່ປິດສຽງແຮງເທົ່າໃດນັ້ນກໍ່ເຮັດໃຫ້ເປັນອັນຕະລາຍຕໍ່ຫູເທົ່ານັ້ນ.

ຜູ້ຊ່ຽວຊານໃຫ້ຄຳແນະນຳດັ່ງນີ້:

- ໃຫ້ເປີດສຽງດັງນ້ອຍສຸດສຳລັບຊຸດຟັງຫູ, ລຳໂພງ ຫຼື ເຄື່ອງສຽງ.
- ຫຼີກລ້ຽງການເປີດສຽງດັງເພື່ອຄຸມສຽງຈາກທາງນອກ.
- ຜ່ອນສຽງລົງຖ້າທ່ານບໍ່ໄດ້ຍິນສຽງຄົນລົມໃກ້ກັບທ່ານ.

ກະລຸນາໃຊ້ເວລາອ່ານພາກນີ້.

## ຄື້ນວິທະຍຸ

ຫຼັກຖານຄວາມສອດຄ່ອງກັບມາດຕະຖານສາກົນ (ICNIRP) ຫຼື ກັບ ຄໍາແນະນໍາຂອງສະຫະພາບເອີຣົບ 2014/53/EU (RED) ມັນຈໍາເປັນສໍາລັບມືຖືທຸກໂມເດວກ່ອນຈະວາງຂາຍໃນທ້ອງຕະຫຼາດ. ການປ້ອງການສຸຂະພາບ ແລະ ຄວາມປອດໄພສໍາລັບຜູ້ຊົມໃຊ້ບຸກຄົນໃດໜຶ່ງແມ່ນພາກບັງຄັບຕາມມາດຕະຖານ ແລະ ຂໍ້ແນະນໍາດັ່ງກ່າວນີ້.

ເຄື່ອງນີ້ສອດຄ່ອງຕາມຄູ່ມືສາກົນວ່າດ້ວຍການນໍາໃຊ້ໄດ້ກັບຄື້ນວິທະຍຸ

ໂທລະສັບຂອງທ່ານເປັນໄດ້ທັງວິທະຍຸສົ່ງ ແລະ ຮັບ. ມັນໄດ້ອອກແບບບໍ່ໃຫ້ກາຍຂໍ້ກໍານົດທາງຄື້ນວິທະຍຸ (ຄື້ນວິທະຍຸຄວາມຖີ່ສະໜາມແມ່ເຫຼັກ) ແນະນໍາໂດຍຄູ່ມືສາກົນ. ຄູ່ມືໄດ້ຮັບການພັດທະນາໂດຍອົງການວິທະຍາສາດເອກະລາດ (ICNIRP) ແລະ ລວມທັງການອອກແບບຄວາມປອດໄພສານເຄມີຕ່າງໆ ເພື່ອຮັບປະກັນວ່າທຸກຄົນມີຄວາມປອດໄພ, ກ່ຽວກັບອາຍຸ ແລະ ສຸຂະພາບຂອງເຂົາເຈົ້າ.

ຄູ່ມືແນະນໍາຂອງຄື້ນວິທະຍຸແມ່ນໃຊ້ຫົວໜ່ວຍວັດແທກເປັນ ອັດຕາການຊຶມຊັບສະເພາະ, ຫຼື SAR. ຂໍ້ຈໍາກັດ SAR ສໍາລັບໂທລະສັບແມ່ນ 2W/kg.

ການທົດສອບ SAR ແມ່ນປະຕິບັດໂດຍໃຊ້ມາດຕະຖານການປະຕິບັດຕໍາແໜ່ງກັບເຄື່ອງສົ່ງສັ

ນຍານທີ່ສູງສຸດຍັ້ນຍືນລະດັບພະລັງງານໃນທຸກການທົດສອບຊ່ອງຄົ້ນຄວາມຖີ່.

ການທົດສອບ ແລ້ງ-ຮ່າງກາຍ ໄດ້ຮັບການທົດສອບຕ່າງຫາກໃນໄລຍະຫ່າງ 1.5ຊມ ເພື່ອສອດຄ່ອງກັບ RF
ຄຳແນະນຳການນຳໃຊ້ໃນລະຫວ່າງປະຕິບັດການແລ້ງ-ຮ່າງກາຍ,
ເຄື່ອງຈະຕ້ອງຢູ່ຫ່າງຢ່າງໜ້ອຍໄລຍະເທົ່ານີ້ຈາກຮ່າງກາຍ.
ຖ້າທ່ານບໍ່ໃຊ້ອຸປະກອນເສີມທີ່ມີການຮອງຮັບ
ເພື່ອຮັບປະກັນໃຫ້ທ່ານໃຊ້ອຸປະກອນທີ່ບໍ່ມີໂລຫະ ແລະ
ຕຳແໜ່ງໂທລະສັບໃຫ້ຫ່າງອອກໄປຈາກຮ່າງກາຍຂອງທ່ານ.

ສຳລັບຂໍ້ມູນເພີ່ມເຕີມທ່ານສາມາດເຂົ້າໄປເບິ່ງໄດ້ທີ່
www.energizeyourdevice.com

ຂໍ້ມູນເພີ່ມເຕີມກ່ຽວກັບສະໜາມແມ່ເຫຼັກ ແລະ
ສາທາລະນະສຸກແມ່ນມີຢູ່ເວັບໄຊທ໌ລຸ່ມນີ້. http://www.who.int/peh-emf.

ໂທລະສັບຂອງທ່ານແມ່ນມີແອນແຕນໃນຕົວ. ສຳລັບການນຳໃຊ້,
ທ່ານບໍ່ຄວນຈັບມັນ ຫຼື ປ່ຽນແປງມັນ.

ເພາະໂທລະສັບມີຊ່ອງຂອງພັບຊັບ,
ທີ່ມັນສາມາດໃຊ້ໃນຕຳແໜ່ງນອກຈາກຕິດກັບຫູຂອງທ່ານ.
ໃນກໍລະນີເປັນແບບນັ້ນ ເຄື່ອງຕ້ອງສອດຄ່ອງກັບຄູ່ມື
ເມື່ອໃຊ້ກັບສາຍຟັງຫູ ຫຼື ສາຍ USB. ຖ້າທ່ານໃຊ້ອຸປະກອນເສີມອື່ນ
ເພື່ອຮັບປະກັນໃຫ້ທ່ານໃຊ້ອຸປະກອນທີ່ບໍ່ມີໂລຫະ ແລະ
ຕຳແໜ່ງໂທລະສັບໃຫ້ຫ່າງອອກໄປຈາກຮ່າງກາຍຂອງທ່ານຢ່າງນ້ອຍ 1.5ຊມ.

ກະລຸນາໃຊ້ເວລາອ່ານຂໍ້ທີ່ສຳຄັນນີ້.

## ຄື່ນວິທະຍຸ

ຈຳເປັນຕ້ອງມີຫຼັກຖານການປະຕິບັດຕາມມາດຕະຖານສາກົນ (ICNIRP) ຫຼື ຕາມຄຳສັ່ງຄະນະກຳມະການເອີຣົບ 2014/53/EU (RED) ສຳລັບໂທລະສັບມືຖືທຸກລຸ້ນກ່ອນທີ່ຈະວາງຈຳໜ່າຍ. ການປົກປ້ອງສຸຂະພາບ ແລະ ຄວາມປອດໄພສຳລັບຜູ້ໃຊ້ຄົນອື່ນແມ່ນຂໍ້ກຳນົດທີ່ສຳຄັນຂອງມາດຕະຖານເຫຼົ່ານີ້ ຫຼື ຄຳສັ່ງນີ້.

ອຸປະກອນນີ້ກົງຕາມຂໍ້ແນະນຳສາກົນສຳລັບການຮັບຄື່ນວິທະຍຸ

ອຸປະກອນມືຖືຂອງທ່ານແມ່ນເຄື່ອງສົ່ງ ແລະ ເຄື່ອງຮັບສັນຍານວິທະຍຸ. ມັນຖືກອອກແບບມາເພື່ອບໍ່ໃຫ້ເກີນຂີດຈຳກັດສຳລັບການຮັບຄື່ນວິທະຍຸ (ສະໜາມແມ່ເຫຼັກໄຟຟ້າຄວາມຖີ່ວິທະຍຸ) ທີ່ແນະນຳໄວ້ຕາມຂໍ້ແນະນຳສາກົນ. ຂໍ້ແນະນຳດັ່ງກ່າວຖືກພັດທະນາໂດຍອົງການທາງວິທະຍາສາດອິດສະຫຼະ (ICNIRP) ແລະ ລວມມີຂອບເຂດຄວາມປອດໄພທີ່ສຳຄັນທີ່ອອກແບບມາເພື່ອຮັບຮອງຄວາມປອດໄພຂອງທຸກຄົນໂດຍບໍ່ຄຳນຶງເຖິງອາຍຸ ແລະ ສຸຂະພາບ.

## ການປະຕິບັດຕາມກົດລະບຽບຂອງສະຫະພາບເອີຣົບ

ອຸປະກອນນີ້ປະຕິບັດຕາມຂໍ້ກຳນົດທີ່ສຳຄັນ ແລະ ບົດບັນຍັດອື່ນທີ່ກ່ຽວຂ້ອງກັບຄຳສັ່ງ 2014/53/EU.

ສຳລັບການປະກາດການປະຕິບັດຕາມ, ເຂົ້າເບິ່ງທີ່ເວັບໄຊທ໌ www.energizeyourdevice.com

ແຈ້ງການ: ປະຕິບັດຕາມກົດລະບຽບແຫ່ງຊາດປະຈຳທ້ອງຖິ່ນຢູ່ສະຖານທີ່ບ່ອນທີ່ຈະໃຊ້ອຸປະກອນ. ອຸປະກອນນີ້ອາດຈະຖືກຈຳກັດການໃຊ້ໃນບາງປະເທດ ຫຼື ທຸກປະເທດທີ່ເປັນສະມາຊິກຂອງສະຫະພາບເອີຣົບ (EU)

ໝາຍເຫດ:

- ເນື່ອງຈາກເອກະສານທີ່ແນບມາທີ່ໃຊ້, ໂທລະສັບມືຖືຈະຕ້ອງເຊື່ອມຕໍ່ກັບສ່ວນຕໍ່ປະສານ USB ລຸ້ນ 2.0 ຫຼື ສູງກວ່ານັ້ນ. ບໍ່ອະນຸຍາດການເຊື່ອມຕໍ່ແບບສາຍສາກ USB.

- ຈະຕ້ອຕິດຕັ້ງອະແດັບເຕີໃກ້ກັບອຸປະກອນ ແລະ ຕ້ອງສາມາດເຂົ້າເຖິງໄດ້ງ່າຍ.

- ຫ້າມໃຊ້ໂທລະສັບມືຖືໃນສະພາບແວດລ້ອມທີ່ມີອຸນຫະພູມສູງເກີນໄປ ຫຼື ຕ່ຳເກີນໄປ, ຫ້າມປະໂທລະສັບມືຖືໄວ້ພາຍໃຕ້ແສງແດງແຮງ ຫຼື ສະພາບແວດລ້ອມທີ່ປຽກຊຸ່ມເກີນໄປ. ອຸນຫະພູມທີ່ເໝາະສົມສຳລັບໂທລະສັບ ແລະ ອຸປະກອນເສີມແມ່ນ -10℃-55℃.

- ເມື່ອສາກ, ກະລຸນາວາງໂທລະສັບໄວ້ໃນສະພາບແວດລ້ອມທີ່ມີອຸນຫະພູມຫ້ອງປົກກະຕິ ແລະ ມີການລະບາຍອາກາດໄດ້ດີ. ຂໍແນະນຳໃຫ້ສາກໂທລະສັບໃນສະພາບແວດລ້ອມທີ່ມີອຸນຫະພູມລະດັບ 5℃~25℃. ກະລຸນາຮັບປະກັນວ່າໄດ້ໃຊ້ເຄື່ອງສາກທີ່ໄດ້ຮັບຈາກຜູ້ຜະລິດເທົ່ານັ້ນ. ການໃຊ້ເຄື່ອງສາກທີ່ບໍ່ໄດ້ຮັບອະນຸຍາດອາດຈະເຮັດໃຫ້ເກີດອັນຕະລາຍ ແລະ ລະເມີດຫົວຂໍ້ການອະນຸຍາດຂອງໂທລະສັບ ແລະ ການຮັບປະກັນ.

- ຂໍ້ຄວນລະວັງ: ຄວາມສ່ຽງໃນການເກີດລະເບີດຖ້າປ່ຽນຖ່າຍແບັດເຕີຣີບໍ່ຖືກປະເພດ. ການຖິ້ມແບັດເຕີຣີທີ່ໃຊ້ແລ້ວຕາມຄຳແນະນຳ

- ແຮງດັນສຽງທີ່ຫຼາຍເກີນໄປຈາກຫູຟັງ ແລະ ຊຸດຫູຟັງສາມາດເຮັດໃຫ້ສູນເສຍການໄດ້ຍິນ.

ສຳລັບຂໍ້ມູນເພີ່ມເຕີມ ທ່ານສາມາດເຂົ້າໄປທີ່ www.energizeyourdevice.com

ຂໍ້ມູນເພີ່ມເຕີມກ່ຽວກັບສະໜາມແມ່ເຫຼັກໄຟຟ້າ ແລະ ສາທາລະນະສຸກ ແມ່ນມີໃຫ້ໃນເວັບໄຊທ໌ຕໍ່ໄປນີ້. http://www.who.int/peh-emf.

ໂທລະສັບຂອງທ່ານມີເສົາອາກາດໃນຕົວ. ສໍາລັບການໃຊ້ງານທີ່ດີສຸດ, ທ່ານຄວນຫຼີກລ່ຽງການສໍາຜັດມັນ ແລະ ຫຼຸດລະດັບມັນ.

ເນື່ອງຈາກອຸປະກອນມືຖືມີຟັງຄ໌ຊັນໃຊ້ງານຫຼາຍລະດັບ, ສາມາດໃຊ້ພວກມັນໃນຕໍາແໜ່ງອື່ນທີ່ກົງກັນຂ້າມກັບຫູຂອງທ່ານ. ໃນສະພາບການດັ່ງກ່າວ ອຸປະກອນຈະປະຕິບັດຕາມຂໍ້ແນະນໍາເມື່ອໃຊ້ກັບຊຸດຫູຟັງ ຫຼື ສາຍຂໍ້ມູນ USB. ຖ້າທ່ານກໍາລັງອຸປະກອນເສີມອື່ນ ຮັບປະກັນວ່າຜະລິດຕະພັນທີ່ໃຊ້ນັ້ນບໍ່ມີໂລຫະ ແລະ ວາງຕໍາແໜ່ງໂທລະສັບໃຫ້ຫ່າງຈາກຮ່າງກາຍຢ່າງໜ້ອຍ 1.5 cm.

Energizer® CE

**ໃບຢັ້ງຢືນການປະຕິບັດຕາມ**
**ພະລັງງານ E10+**

ພວກເຮົາ, **AVENIR TELECOM**,
(208, Boulevard de Plombières, 13581 Marseille Cedex 20, FRANCE)
ຂໍປະກາດວ່າ:

**ENERGIZER** ປະຕິບັດຕາມມາດຕະຖານ ແລະ ຂໍ້ກໍານົດຂອງຄໍາສັ່ງຕ່າງໆ. ໃບຢັ້ງຢືນການປະຕິບັດຕາມຂັ້ນຕອນທີ່ກໍານົດໄວ້ໃນຂໍ້ IV ຂອງຄໍາສັ່ງ 2014/53/EU ແມ່ນຢູ່ພາຍໃຕ້ການຄວບຄຸມຂອງອົງການຕໍ່ໄປນີ້:

**BAY AREA COMPLIANCE LABORATORIES CORP.**
1274 Anvilwood Ave. Sunnyvale, CA 94089. USA
www.baclcorp.com
ໂທລະສັບ: +1 408 732 9162 ແຟັກ: +1 408 732 9164

ຂໍ້ຄວາມເຕັມຂອງໃບຢັ້ງຢືນການປະຕິບັດຕາມຂອງອຸປະກອນມີໃຫ້ຕາມການຮ້ອງຂໍທາງໄປສະນີຕາມທີ່ຢູ່ຕໍ່ໄປນີ້: **AVENIR TELECOM -** 208, Boulevard de Plombières, 13581 Marseille Cedex 20, France.

**07/09/2017**
(ວັນທີ)

**Jean-Daniel BEURNIER / CEO**
(ຊື່ ແລະ ລາຍເຊັນຂອງຜູ້ໄດ້ຮັບອະນຸຍາດ)

| ຄ່າ SAR ສູງສຸດສໍາລັບລຸ້ນນີ້ ແລະ ເງື່ອນໄຂຕາມທີ່ບັນທຶກໄວ້: | |
|---|---|
| GSM 900 | 0.586 W/kg 10g Head SAR \| 0.731 W/kg 10g Body SAR |
| DCS 1800 | 0.441 W/kg 10g Head SAR \| 0.946 W/kg 10g Body SAR |

ໃນລະຫວ່າງການໃຊ້, ຄ່າ SAR ຕົວຈິງສໍາລັບອຸປະກອນນີ້ມັກຈະຕໍ່າກວ່າຄ່າທີ່ລະບຸໄວ້ຂ້າງເທິງ. ນີ້ເປັນຍ້ອນວ່າ ເພື່ອຈຸດປະສົງຂອງປະສິດທິພາບຂອງລະບົບ ແລະ ເພື່ອຫຼຸດການລົບກວນເຄືອຂ່າຍ, ພະລັງງານການໃຊ້ງານຂອງອຸປະກອນມືຖືຂອງທ່ານຫຼຸດລົງໂດຍອັດຕະໂນມັດເມື່ອພະລັງງານເຕັມບໍ່ຈໍາເປັນສໍາລັບການໂທ. ຍິ່ງຫຼຸດກໍາລັງຜະລິດພະລັງງານລົງເທົ່າໃດ, ຍິ່ງຫຼຸດຄ່າ SAR ລົງເທົ່ານັ້ນ.

غوغل, غوغل بلاي و العلامات الاخرى هي علامات تجارية لشركة غوغل ش.ذ.م.م

Google, Google Play and other marks are trademarks of Google LLC.

إنيرجايزر وبعض التصاميم الجرافيكية هي علامات تجارية لشركة إنرجايزر ، والشركات التابعة ذات الصلة وتستخدم بموجب ترخيص من أفينير تليكوم. جميع الأسماء التجارية الأخرى هي علامات تجارية لأصحابها. لا أفينير تليكوم ولا إنرجايزر العلامات التجارية، هي تابعة لأصحابها من علاماتها التجارية!

© 2018 Energizer. Energizer and certain graphic designs are trademarks of Energizer Brands, LLC and related subsidiaries and are used under license by Avenir Telecom©. All other brand names are trademarks of their respective owners. Neither Avenir Telecom© nor Energizer Brands, LLC is affiliated with the respective owners of their trademarks.